| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດວິຊາຊີບເພສັດຊະກຳ ເພື່ອສ້າງຕັ້ງບໍລິສັດຂາຍຢົກຢາ ແລະ ອຸປະກອນການແພດ ພາຍໃນ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoPH-FDD-10 | 03.10.2017 | ກົມອາຫານ ແລະ ຢາ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄຳຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |

| ຂໍ້ມູນພື້ນຖານ | |
|---|---|
| ປະເພດທຸລະກິດສະເພາະ ທີ່ຕິດພັນກັບໃບອະນຸຍາດ | Q - ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ບໍລິສັດຂາຍຍົກ ຈະເປັນຈຸດທໍາອິດຂອງການເຂົ້າສູ່ຕະຫຼາດສໍາລັບຢາແລະອຸປະກອນການແພດໃນ ສປປ ລາວ ສະນັ້ນ, ຈຶ່ງຈໍາເປັນຕ້ອງເກັບກໍາຂໍ້ມູນ ແລະ ຂຶ້ນທະບຽນຂອງບໍລິສັດທັງຫມົດເຫຼົ່ານີ້ເພື່ອປ້ອງກັນຄວາມສ່ຽງທີ່ອາດເກີດຂຶ້ນກັບສຸຂະພາບຂອງຄົນທີ່ເກີດຂຶ້ນ. |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດໍາເນີນທຸລະກິດການຂາຍຍົກຢາ ແລະ ອຸປະກອນການແພດ ຈາກຜູ້ຜະລິດພາຍໃນ ຫຼື ບໍລິສັດສົ່ງອອກ - ສົ່ງອອກ ໃຫ້ແກ່ຮ້ານຂາຍຍ່ອຍຢາຢູ່ ສປປ ລາວ. |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | http://www.fdd.gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 90 | ການຍື່ນໃບຄໍາຮ້ອງຈະຖືກສົ່ງເຖິງພະແນກອາຫານແລະຢາເມືອງ ຫຼື ພະແນກອາຫານແລະຢາແຂວງທີ່ບໍລິສັດຕັ້ງຢູ່. ຫຼັງຈາກນັ້ນ, ໃບຄໍາຮ້ອງຈະໄດ້ຮັບການປະເມີນ, ກວດກາ ແລະ ອະນຸມັດໂດຍແຕ່ລະຂັ້ນຂອງເຈົ້າຫນ້າທີ່ໃນທ້ອງຖິ່ນກ່ອນທີ່ໃບຄໍາຮ້ອງດັ່ງກ່າວຈະຖືກສົ່ງໄປຫາກົມອາຫານ ແລະ ຢາ. ສຸດທ້າຍ, ລັດຖະມົນຕີວ່າການກະຊວງສາທາລະນະສຸກຈະແມ່ນຜູ້ລົງນາມໃນໃບອະນຸຍາດ. |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ຕ້ອງມີເພສັດຊະກອນ ຫຼື ຜູ່ຊ່ວຍເພສັດຊະກອນ (ການຢາຊັ້ນກາງ) ທີ່ເປັນຄົນສັນຊາດລາວ ຊຶ່ງມີໃບປະກາດສະນີຍະບັດ ຫຼື ໃບຢັ້ງຢືນສໍາເລັດການສຶກສາວິຊາຊີບເພສັດຊະກໍາທີ່ອອກໃຫ້ໂດຍສະຖາບັນການສຶກສາທີ່ກ່ຽວຂ້ອງ | |

| ຄຸນະສົມບັດ ແລະ ເອກະສານປະກອບ | |
|---|---|
| | ທັງພາຍໃນແລະຕ່າງປະເທດ ແລະ ໄດ້ຮັບອະນຸຍາດວິຊາຊີບເພສັດຊະກໍາຈາກກະຊວງສາທາລະນະສຸກ ແລະ ຕ້ອງມີປະສົບການຮັບໃຊ້ວຽກງານການຢາ 4 ປີຂຶ້ນໄປ.<br>ຖ້າແມ່ນພະນັກງານສັງກັດລັດຕ້ອງມີໃບແຕ່ງຕັ້ງຢ່າງເປັນທາງການ, ຕ້ອງແມ່ນຜູ້ທີ່ບໍ່ຢູ່ໃນໄລຍະຖືກດໍາເນີນຄະດີ ຫຼື ປະລະໜ້າທີ່ ຫຼື ຖືກປະຕິບັດວິໄນຍ້ອນການຜິດພາດທາງດ້ານວິຊາຊີບເພສັດຊະກໍາ ຫຼື ຄ້າຂາຍຢາເສບຕິດໃຫ້ໂທດ; 2. ສະຖານທີ່ດໍາເນີນທຸລະກິດຂາອອກ-ຂາເຂົ້າ, ສາຂາບໍລິສັດ/ໂຮງງານ ແລະ ຕົວແທນຈໍາໜ່າຍຕ້ອງສະອາດ, ມີເນື້ອທີ່ຢ່າງຕໍ່າ 20 ຕາຕະລາງແມັດຂຶ້ນໄປ, ເປັນຫ້ອງເຮືອນສະເພາະ, ບໍ່ປົນເປສະຖານທີ່ພັກເຊົາ ແລະ ບ່ອນຂາຍເຄື່ອງອື່ນໆ ທີ່ບໍ່ແມ່ນຢາ ຫຼື ຜະລິດຕະພັນການແພດ; 3. ຕ້ອງມີສະຖານທີ່ເກັບມ້ຽນສິນຄ້າທີ່ສະອາດ ແລະ ຖືກຕ້ອງຕາມມາດຕະຖານຢ່າງນ້ອຍຂະໜາດຄວາມກວ້າງ 4 ແມັດ, ຄວາມຍາວ 8 ແມັດ ແລະ ຄວາມສູງຕາມເໝາະສົມ, ມີລະບົບບັນຊີສາງ, ມີລະບົບປ້ອງກັນສັດແລະແມງໄມ້, ລະບົບປັບຄວາມເຢັນ, ແສງສະຫວ່າງ, ມີອຸປະກອນຕິດຕາມອຸນຫະພູມແລະຄວາມຊຸ່ມ, ພາຍໃນສາງຕ້ອງມີອຸປະກອນຮັບໃຊ້ທີ່ຈໍາເປັນ, ມີຕູ້ເຢັນທີ່ມີອຸນຫະພູມສູງສຸດບໍ່ໃຫ້ເກີນ 2-8 ອົງສາເຊ ພ້ອມດ້ວຍເຄື່ອງວັດແທກອຸນຫະພູມໃນກໍລະນີທີ່ມີຢາຕ້ອງຮັກສາໄວ້ໃນຄວາມເຢັນເຊັ່ນ: ຢາຢັດທະວານ ຫຼື ຢາອື່ນໆ (ປະຕິບັດຕາມຫຼັກການການຂາຍົກທີ່ດີ (Good Whole Selling Practic-GWP ແລະ ຫຼັກການການເກັບຮັກສາທີ່ດີ (Good Storage Practice)). |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ຈະປະຕິເສດການຂໍໃບອະນຸຍາດ?** | ປະຕິເສດໃນກໍລະນີທີ່ຜູ້ຮ້ອງຂໍບໍ່ມີເງື່ອນໄຂທີ່ກໍານົດໄວ້ໄດ້ . |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 24 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ຜູ້ຮ້ອງຂໍຕ້ອງສະເໜີຂໍຕໍ່ໃບອະນຸຍາດພາຍໃນ 3 ເດືອນ ກ່ອນໝົດອາຍຸການນໍາໃຊ້. |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມ** | **ຄ່າບໍລິການວິຊາ** | **ຄ່າທໍານຽມ** | **ຄ່າ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທຳນຽມ | | | | |
|---|---|---|---|---|
| ແບບຟອມຄຳ ຮ້ອງ ຫລື ບໍ່? | ການ | | ແບບຟອມ ຄຳຮ້ອງ | |
| ແມ່ນແລ້ວ | 0.00 | 600000.00 | 0.00 | 600000.00 |
| **ຄຳເຫັນ** | ອີງຕາມລັດຖະບັນຍັດປະທານປະເທດ ເລກທີ 03/ປທ | | | |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທຳນຽມ | ຄ່າ ແບບຟອມ ຄຳຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 600000.00 | 0.00 | 600000.00 |
| **ຄຳເຫັນ** | ອີງຕາມລັດຖະບັນຍັດປະທານປະເທດ ເລກທີ 03/ປທ | | | |

| ນິຕິກຳທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ນິຕິກຳ | ເລກທີ | ວັນທີ | ຄຳເຫັນ |
| ຂໍ້ຕົກລົງວ່າດ້ວຍ ການສ້າງຕັ້ງບໍລິສັດດຳເນີນທຸລະກິດດ້ານຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) | 1820/ສທ | 25.08.2017 | ມາດຕາ 6, 9.3, 14, 17, 18, 26 |
| ກົດໝາຍວ່າດ້ວຍ ຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) | 07/ສພຊ | 21.12.2011 | ພາກທີ III, ໝວດທີ 1, ມາດຕາ 12, 14 and 17 |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ຮູບ |
| ບົດລາຍງານການກວດກາສະຖານທີ່ ແລະ ສຸຂະພິບານ |
| ໃບຢັ້ງຢືນວຸດທິການສຶກສາ |
| ຊີວະປະຫວັດ |

| ເອກະສານປະກອບ |
| --- |
| ໃບຢັ້ງຢືນສຸຂະພາບ |
| ບົດວິພາກເສດຖະກິດເຕັກນິກ |
| ແຜນວາດທີ່ຕັ້ງຂອງວິສາຫະກິດ |
| ໃບແຈ້ງໂທດ |
| ໃບຢັ້ງຢືນທີ່ຢູ່ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
| --- | --- | --- |
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |